Washington State Department of Social & Health Services
Transforming lives

# ຄຳຊີ້ນຳສຳລັບການຂຽນປະກອບຕາຊິງສັ່ງນ້ຳຫນັກຂອງການປະພຶດປັບຕົວ ICAP / SIB-R
# Guidelines for Completing the ICAP / SIB-R Adaptive Behavior Scale

ພາກສ່ວນການປະພຶດປັບຕົວຂອງ ICAP ຕີຣາຄາປະເມີນຜົນເບິ່ງຄວາມຊຳນານໃນການດຳຣົງຊີວິດປະຈຳວັນຂອງຜູ້ຮ້ອງຂໍເອົາ ແລະ ຄວາມຮັບຮູ້ຂອງຜູ້ຮ້ອງຂໍເອົາກ່ຽວກັບວ່າ *ເມື່ອເວລາໃດ* ຈະປະຕິບັດຄວາມຊຳນານເຫລົ່ານີ້. ຈຸດເປົ້າຫມາຍແມ່ນເພື່ອຈະຖ່າຍຮູບເອົາຄວາມສາມາດຂອງເຂົາເຈົ້າ. ການປະພຶດປັບຕົວຂອງຜູ້ຮ້ອງຂໍອາດຈະຖືກຈຳກັດແນວໃດແນວນຶ່ງຖ້າຫາກວ່າເຂົາເຈົ້າຂາດເຂີນຄວາມສາມາດໃນການຮັບຮູ້ ຫລື ຄວາມຮູ້ຈັກວ່າເມື່ອເວລາໃດທີ່ຈະປະຕິບັດຄວາມຊຳນານຢ່າງເຫມາະສົມໂດຍບໍ່ຕ້ອງຖືກຖາມໃຫ້ເຮັດ ຫລື ຖືກຕັກເຕືອນຢູ່ເລື້ອຍໆ.

### ເຮັດ (ຫລື ສາມາດເຮັດ) ພາລະຫນ້າທີ່ທັງຫມົດໄດ້ໂດຍປາສຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ

*ເຮັດພາລະຫນ້າທີ່ທັງຫມົດ* ຫມາຍເຖິງທຸກໆພາກສ່ວນຂອງພາລະຫນ້າທີ່. ລາຍຊື່ຂອງການປະພຶດປັບຕົວ ICAP ບາງຢ່າງມີຫລາຍກວ່ານຶ່ງພາກສ່ວນ. ຖ້າຫາກວ່າບຸກຄົນເຮັດໄດ້ດີຫລາຍໃນພາກສ່ວນນຶ່ງຂອງພາລະຫນ້າທີ່, ແຕ່ວ່າມີແຕ່ເຮັດໄດ້ດີປານກາງເທົ່ານັ້ນໃນພາກສ່ວນອື່ນ, ຕີຣາຄາສິ່ງນັ້ນວ່າເຮັດໄດ້ດີປານກາງເທົ່ານັ້ນ.

*ສາມາດເຮັດ.* ຢູ່ໃນກໍຣະນີຫນ້ອຍທີ່ສຸດ ມັນອາດຈະມີສິ່ງນຶ່ງທີ່ຜູ້ຮ້ອງຂໍໄດ້ຮູ້ຈັກດີ ຫລື ຮູ້ຈັກດີສ່ວນນຶ່ງແຕ່ວ່າບໍ່ມີໂອກາດທີ່ຈະປະຕິບັດ. ບາງເທື່ອອາດຈະແມ່ນວ່າກິຈກັມບໍ່ມີໄວ້ໃຫ້, ຕ້ານຕໍ່ກົດຣະບຽບ, ຫລື ບາງທີມັນເປັນພຽງແຕ່ "ວຽກງານຂອງຄົນອື່ນ" .ຢູ່ໃນກໍຣະນີນີ້,ໃຫ້ກະຕວງວ່າບຸກຄົນນັ້ນຈະເຮັດພາລະຫນ້າທີ່ໄດ້ດີປານໃດ, ດຽວນີ້,ໂດຍປາສຈາກການຝຶກຝົນເພີ້ມເຕີມ, ຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ, ຖ້າຫາກວ່າມີໂອກາດ.

*ປາສຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ.* ອັນນີ້ຫມາຍຄວາມວ່າຜູ້ຮ້ອງຂໍປະຕິບັດພາລະກິດໂດຍບໍ່ໄດ້ຫວັງເພິ່ງໃຜ. ການບອກໃຫ້ເຮັດ ຫລື ການຕັກເຕືອນຄວາມຈຳເທື່ອດຽວເປັນບາງຄັ້ງບາງຄາວແມ່ນຖືກຖືວ່າຮັບເອົາໄດ້. ເຖິງຢ່າງໃດກໍຕາມການຂໍຮ້ອງທີ່ຖືກເຮັດຢູ່ເລີຍໆ, ຫລື ການບອກໃຫ້ເຮັດ ຫລື ການຕັກເຕືອນຄວາມຈຳເປັນຂັ້ນຕອນຈະຖືວ່າເປັນຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ.

ພາຍໃນຂອບເຂດການປະພຶດປັບຕົວສີ່ຢ່າງຂອງ ICAP ແຕ່ລະຢ່າງ, ການປະພຶດທີ່ໄດ້ຖືກລຽງເປັນລຳດັບໂດຍຄວາມຫຍຸ້ງຍາກໄລ່ສະເລັ່ຽຈາກຣະດັບຂອງການເປັນເດັກທາຣົກໄປເຖິງການເປັນຜູ້ໃຫຍ່ເຕັມຕົວ. ການປະພຶດແຕ່ລະຢ່າງໄດ້ຖືກໃຫ້ຄະແນນໃນຕາຕະລາງຈາກ 0 ໄປເຖິງ 3 ໂດຍອີງຕາມຄວາມສາມາດຂອງຜູ້ຮ້ອງຂໍທີ່ຈະປະຕິບັດພາລະກິດໂດຍປາສຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ.

**ເຮັດໄດ້ດີຫລາຍ.** ອັນນີ້ຊີ້ບອກເຖິງຄວາມເປັນເອກຣາດໃນພາລະກິດ. ຜູ້ຮ້ອງຂໍ ອາດຈະແມ່ນ ບໍ່ວ່າຈະເປັນ ເຮັດພາລະກິດໄດ້ເກັ່ງ ຫລື ບໍ່ປະຕິບັດພາລະກິດຕໍ່ໄປອີກແລ້ວຍ້ອນວ່າມັນງ່າຍເກີນໄປ (ຕົວຢ່າງວ່າ, ໂດຍປົກກະຕິແລ້ວຈະກິນເຂົ້າດ້ວຍສ້ອມ ແທນທີ່ວ່າຈະໃຊ້ບ່ວງ; ຕາມປົກກະຕິຈະຍ່າງ, ບໍ່ແມ່ນຄານໄປ) . ບຸກຄົນເຮັດທຸກໆພາກສ່ວນຂອງພາລະກິດໄດ້ໂດຍປາສຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ.

**ເລື້ອຍໆ ຫລື ເກືອບເລື້ອຍໆ - ໂດຍບໍ່ຕ້ອງຖືກຖາມ.** *ເລື້ອຍໆ* ຫມາຍຄວາມວ່າບໍ່ວ່າເມື່ອເວລາໃດທີ່ມັນເປັນການເຫມາະສົມທີ່ຈະເຮັດ. *ໂດຍບໍ່ຕ້ອງຖືກຖາມ* ຫມາຍຄວາມວ່າບໍ່ມີຫລາຍກວ່າການຕັກເຕືອນໃຫ້ຈື່ຈຳໃນບາງຄັ້ງບາງຄາວ. ຜູ້ຮ້ອງຂໍຕ້ອງມີຄວາມຊຳນານໃນຕົວ ແລະ ຮູ້ຈັກວ່າເມື່ອເວລາໃດທີ່ຈະໃຊ້ມັນ, ໂດຍອີງຕາມມາດຕະຖານຂອງການເຮັດນຳສັງຄົມຕາມປົກກະຕິ. ມັນບໍ່ເປັນຫຍັງຖ້າຫາກວ່າບຸກຄົນຂໍເອົາຄຳອະນຸຍາດໄດ້ຢ່າງເຫມາະສົມກ່ອນທີ່ຈະເລີ້ມຕົ້ນເຮັດພາລະກິດ.

**ເຮັດໄດ້ດີພໍສົມຄວນ.** ອັນນີ້ຊີ້ບອກວ່າຜູ້ຮ້ອງຂໍປະຕິບັດພາລະກິດທຸກໆພາກສ່ວນໄດ້ດີພໍສົມຄວນໂດຍປາສຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ.

**ຫລື ¾ ຂອງເວລາ – ອາດຈະຕ້ອງການໃຫ້ຖາມບອກ.** ອັນນີ້ສາມາດຖືກເຂົ້າໃຈວ່າຫມາຍເຖິງວ່າພາລະກິດໄດ້ຖືກເຮັດໄດ້ດີພໍສົມຄວນ, ຊຶ່ງເຮັດໄດ້ດີ ¾ ຂອງເວລາ, ຫລື ຖືກເຮັດໂດຍປາສຈາກຄວາມຊ່ວຍເຫລືອ, ຫລື ການຄວບຄຸມເບິ່ງນຳ ¾ ຂອງເວລາ. ມັນບໍ່ເປັນຫຍັງຖ້າຫາກວ່າຜູ້ຮ້ອງຂໍຕ້ອງການທີ່ຈະຖືກຖາມ ຫລື ຖືກຕັກເຕືອນໃຫ້ຈື່ຈຳເພື່ອຈະເລີ້ມຕົ້ນເຮັດພາລະກິດ.

**ເຮັດ, ແຕ່ວ່າບໍ່ໄດ້ດີ.** ອັນນີ້ຊີ້ບອກເຖິງຜູ້ຮ້ອງຂໍບາງເທື່ອເຮັດ ຫລື ພະຍາຍາມທີ່ຈະເຮັດພາລະກິດທຸກໆພາກສ່ວນໂດຍປາສຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ, ແຕ່ວ່າຜົນອອກມາແມ່ນບໍ່ດີ.

**ຫລື ¼ ຂອງເວລາ – ອາດຈະຕ້ອງການໃຫ້ຖາມບອກ.** ອັນນີ້ສາມາດຖືກເຂົ້າໃຈວ່າຫມາຍເຖິງວ່າພາລະກິດໄດ້ຖືກເຮັດແລ້ວແຕ່ວ່າບໍ່ໄດ້ດີ, ຊຶ່ງເຮັດໄດ້ດີ ¼ ຂອງເວລາ, ຫລື ຖືກເຮັດໂດຍປາສຈາກຄວາມຊ່ວຍເຫລືອ, ຫລື ການຄວບຄຸມເບິ່ງນຳ ¼ ຂອງເວລາ. ມັນບໍ່ເປັນຫຍັງຖ້າຫາກວ່າຜູ້ຮ້ອງຂໍຕ້ອງການທີ່ຈະຖືກຖາມ ຫລື ຖືກຕັກເຕືອນໃຫ້ຈື່ຈຳເພື່ອຈະເລີ້ມຕົ້ນເຮັດພາລະກິດ.

**ບໍ່ເຄີຍຈັກເທື່ອ ຫລື ຫນ້ອຍທີ່ສຸດ.** ອັນນີ້ຊີ້ບອກວ່າພາລະກິດແມ່ນຍາກເກີນໄປ, ວ່າຜູ້ຮ້ອງຂໍບໍ່ຖືກອະນຸຍາດໃຫ້ເຮັດພາລະກິດຍ້ອນວ່າມັນບໍ່ປອດພັຍ, ຫລື ວ່າບຸກຄົນບໍ່ເຄີຍປະຕິບັດທຸກໆພາກສ່ວນຂອງພາລະກິດຈັກເທື່ອ ຫລື ຫນ້ອຍທີ່ສຸດ.

**ແມ້ແຕ່ຖ້າຖືກຖາມ.** ເຮັດບໍ່ໄດ້ດີຈັກເທື່ອ, ແມ້ແຕ່ຖ້າຫາກວ່າຖືກຖາມ ຫລື ຖືກບອກໃຫ້ເຮັດ.

## ດີປານໃດແມ່ນ "ດີ?"

ICAP ແມ່ນທັມມະດາໃນຄະແນນ 1.764 ສຳລັບບຸກຄົນທີ່ບໍ່ເສັຽອົງຄະຕັ້ງແຕ່ອາຍຸຈາກການເປັນເດັກທາຣົກອາຍຸຕ່ຳກວ່າສາມເດືອນໄປຫາການເປັນຜູ້ໃຫຍ່ເຕັມຕົວ. ພໍ່ແມ່ໄດ້ໃຊ້ຕາຕະລາງການໃຫ້ຄະແນນ ICAP ຕາມທີ່ຖືກບັນຣະຍາຍຢູ່ຂ້າງເທິງນີ້ເພື່ອຈະໃຫ້ຄະແນນລູກຂອງເຂົາເຈົ້າ (ແລະ ຜູ້ໃຫຍ່ເພື່ອຈະໃຫ້ຄະແນນເຂົາເຈົ້າເອງ) ໃນພາລະກິດ ICAP ແຕ່ລະຢ່າງ. ເຂົາເຈົ້າໄດ້ພົບວ່າພາລະກິດອັນນີ້ແມ່ນງ່າຍໆ ແລະ ເຮັດໄດ້ໂລດ. ມັນບໍ່ໄດ້ຖືກເອົາໃຫ້, ຫລື ຖືກບອກໃຫ້ເຮັດ, ຣາຍຣະອຽດເພີ້ມເຕີມກ່ຽວກັບພາລະກິດແຕ່ລະຢ່າງ.

ພາລະກິດການປະພຶດປັບຕົວຂອງ ICAP ຖືກບອກເປັນລຳດັບຂອງການຈະເຣີນເຕີບໂຕ. ໃນການພິຈາຣະນາເບິ່ງວ່າພາລະກິດໄດ້ຖືກປະຕິບັດໄດ້ດີປານໃດ, ພໍ່ແມ່ໄດ້ໃຊ້ກິຈກັມໃນແຕ່ລະວັນຂອງເດັກນ້ອຍທີ່ມີອາຍຸຄ້າຍຄຽງກັນຂອງເຂົາເຈົ້າໃຫ້ເປັນສິ່ງສຳຄັນເພື່ອຈະຕັດສິນຄວາມສຳເຣັດຂອງພາລະກິດ. ຕົວຢ່າງວ່າ, ພາລະກິດ *ການໃຊ້ມີດຕັດເພື່ອຈະຕັດເສັ້ນຫນາ ແລະ ຊື່ໆ.* ອັນນີ້ແມ່ນຄວາມຊຳນານທັມມະດາຂອງເດັກນ້ອຍອາຍຸ 3 ປີ. **ເສັ້ນຫນາປານໃດ? ຊື່ປານໃດຈຶ່ງແມ່ນຊື່?** ເອົາຕົວທ່ານເອງໃສ່ໃນເກີບຂອງພໍ່ແມ່, ສັງເກດເບິ່ງກິຈກັມກ່ອນເຂົ້າໂຮງຮຽນທັມມະດາ. ເສັ້ນຫນາອາດຈະເປັນເສັ້ນທີ່ຖືກຂີດໂດຍສໍແຕ້ມ. ເສັ້ນຊື່ອາດຈະເປັນເສັ້ນທີ່ຢູ່ພາຍໃນເສັ້ນນຶ່ງສ່ວນແປດຂອງເສັ້ນຂີດ.

ຖ້າຫາກວ່າທ່ານມີຄວາມຫຍຸ້ງຍາກນຳຂໍ€ຄວາມເຊັ່ນວ່າງ່າຍໆ, ຫລື ສະອາດ, ຫລື ເຫມາະສົມ, ຖາມຕົວທ່ານເອງອັນນີ້:ຣະດັບຂອງການພັດທະນາຕົວໄລ່ສະເລັ່ຽສຳລັບບຸກຄົນທີ່ບໍ່ເສັຽອົງຄະແມ່ນເທົ່າໃດ? ມາດຕະຖານສຳລັບຄວາມສຳເຣັດອັນໃດທີ່ພໍ່ແມ່ ຫລື ນາຍຄູຂອງເດັກນ້ອຍໃນອາຍຸນັ້ນຈະວາງໃຊ້?

ຫ້ອງສະອາດແມ່ນສະອາດປານໃດ? ພໍ່ແມ່ຂອງເດັກນ້ອຍອາຍຸ 11 – 15 ປີຄາດຫມາຍວ່າລູກຂອງເຂົາເຈົ້າຈະເລີ້ມຕົ້ນທີ່ຈະຮັບເອົາຄວາມຮັບຜິດຊອບອັນນີ້.ພໍ່ແມ່ຂອງເດັກນ້ອຍອາຍຸຣະຫວ່າງນີ້ຈະຄິດວ່າຢ່າງໃດເມື່ອເຂົາເຈົ້າບອກວ່າ "ເຮັດ, ແຕ່ວ່າບໍ່ໄດ້ດີ," ຫລື "ເຮັດໄດ້ດີຫລາຍ"?

ຄວາມຫຍຸ້ງຍາກບາງເທື່ອຈະເກີດຂຶ້ນເມື່ອເວລາຕີຣາຄາປະເມີນຜົນເບິ່ງຜູ້ໃຫຍ່ທີ່ມີຄວາມເສັຽອົງຄະດ້ານຈິດໃຈ ຫລື ຮ່າງກາຍຍ້ອນວ່າພາລະກິດຂອງການປະພຶດໄດ້ແຕກຕ່າງໄປຈາກປົກກະຕິ. ເຖິງຢ່າງໃດກໍຕາມ, ມາດຕະຖານຂອງຄວາມສຳເຣັດຄວນຈະເປັນອັນດຽວກັນກັບທີ່ເປັນສຳລັບກຸ່ມຄົນທັມມະດາ.

## ການໄຈ້ແຍກອອກຈາກກັນໃນການປະພຶດປັບຕົວ, ປັບຕົວບໍ່ໄດ້ດີ, ແລະ ບໍ່ຮ່ວມມື.

ຖ້າຫາກວ່າມີຄວາມບໍ່ສອດຄ່ອງກັນໃນຣະຫວ່າງຄຸນນະພາບຂອງການປະຕິບັດງານຂອງຜູ້ຮ້ອງຂໍ (ເຊັ່ນວ່າເຮັດໄດ້ດີຢູ່ເລື້ອຍໆ ຫລື ເກືອບເລື້ອຍໆ) ແລະ ຣະຍະຫ່າງກັນ (ເຊັ່ນວ່າ, ¾ ຂອງເວລາ) , ຄະແນນຄວນຈະຖືກອີງຕາມໂດຍຕົ້ນຕໍແລ້ວກ່ຽວກັບຄຸນນະພາບຂອງການປະຕິບັດງານ, ຈຸດມຸ່ງໃສ່ຂອງພາກສ່ວນການປະພຶດປັບຕົວຂອງ ICAP ແມ່ນກ່ຽວກັບຄວາມສາມາດເຮັດໄດ້. ຄົນໃດຄົນນຶ່ງຜູ້ທີ່ຖ້າຫາກວ່າເມື່ອຍ, ໃຈຮ້າຍ ຫລື ເລືອດຮ້ອນ ບາງເທື່ອຈະປະຕິເສດທີ່ຈະປະຕິບັດພາລະກິດອາດຈະຍັງຈະຖືກໃຫ້ຄະແນນວ່າ *ເຮັດໄດ້ດີໂດຍບໍ່ຕ້ອງຖືກບອກ* ຖ້າຫາກວ່າຄວາມຊຳນານແມ່ນຢູ່ພາຍໃນຄວາມສາມາດຂອງເຂົາເຈົ້າ ແລະ ໂດຍທົ່ວໄປແລ້ວປະຕິບັດງານໄດ້ດີ. ຖ້າຫາກວ່າການປະຕິເສດແມ່ນຍັງຄົງຢູ່ແຕ່ວ່າໃຊ້ນຳແຕ່ພາລະກິດການປັບຕົວອັນເຈາະຈົງບາງຢ່າງເທົ່ານັ້ນ, ຢ່າງຫລາຍສຸດ ມັນຈະລຸດຄະແນນການປັບຕົວຂອງຜູ້ຮ້ອງຂໍລົງໂດຍນຶ່ງຄະແນນໃນພາລະກິດອັນເຈາະຈົງເຫລົ່ານີ້.ຢູ່ໃນກໍຣະນີນີ້,ຄວາມບໍ່ຮ່ວມມືຈະບໍ່ຖືກໃຫ້ຄະແນນວ່າເປັນບັນຫາດ້ານການປະພຶດ.

ການປະພຶດທີ່ແຊກແຊງນຳກິຈກັມແຕ່ລະວັນຂອງຜູ້ຮ້ອງຂໍ ຫລື ນຳກິຈກັມຂອງຜູ້ທີ່ຢູ່ອ້ອມແອ້ມເຂົາເຈົ້າຄວນຈະຖືກໃຫ້ຄະແນນວ່າເປັນບັນຫາດ້ານການປະພຶດ, *ບໍ່ແມ່ນ* ວ່າການຂາດເຂີນການປະພຶດປັບຕົວ. ການປະຕິເສດທີ່ຈະປະຕິບັດພາລະກິດທີ່ຈຳເປັນທີ່ຕົກຢູ່ພາຍໃນຄວາມສາມາດຂອງບຸກຄົນ, ບາງເທື່ອຖືກເອີ້ນວ່າການບໍ່ປະຕິບັດຕາມຂອງການປະພຶດທີ່ບໍ່ຮ່ວມມື, ອາດຈະຖືກບັນທຶກໄວ້ຢູ່ໃນພາກສ່ວນການປະພຶດທີ່ເປັນບັນຫາຂອງ ICAP ຖ້າຫາກວ່າການປະຕິເສດ ແລະ ທັມມະດາພຽງພໍທີ່ຈະກໍ່ຕັ້ງບັນຫາທີ່ຍັງມີຢູ່ຕໍ່ໄປໃນຄວາມຊຳນານປັບຕົວຫລາຍໆຢ່າງ. ຢູ່ໃນກໍຣະນີທີ່ມີຄວາມບໍ່ຮ່ວມມືນຳຂອງຜູ້ຮ້ອງຂໍອາດຈະສະທ້ອນເຖິງໃນຄະແນນຂອງການປະພຶດປັບຕົວ, ຊຶ່ງຄວນຈະຖືກຕີຣາຄາໃສ່ພື້ນຖານຂອງຄວາມສາມາດແທນທີ່ວ່າຈະແມ່ນຄວາມຮ່ວມມື.

## ການພິຈາລະນາເບິ່ງແນວອື່ນໆ

### ຄວາມເສັຽອົງຄະດ້ານຮ່າງກາຍ

ຖ້າຫາກວ່າຄວາມເສັຽອົງຄະທາງດ້ານຮ່າຍກາຍຂອງຜູ້ຮ້ອງຂໍກີດກັ້ນເຂົາເຈົ້າຈາກການປະຕິບັດພາລະກິດໂດຍປາສຈາກຄວາມຊ່ວຍເຫລືອ, ເຖິງແມ່ນວ່າມັນຈະຢູ່ພາຍໃນຄວາມສາມາດທາງຈິດໃຈຂອງເຂົາເຈົ້າ, ພາລະກິດຕ້ອງຖືກໃຫ້ຄະແນນວ່າ"ບໍ່ເຄີຍຈັກເທື່ອ ຫລື ຫນ້ອຍທີ່ສຸດ" (ຫລື ອາດຈະເປັນໄປໄດ້ຢູ່ໃນຣະດັບປານກາງ) . ຜູ້ຮ້ອງຂໍຄວນຈະບໍ່ຖືກປັບໄຫມລົງໂທດ ຫລື ບໍ່ຖືກໃຫ້ຣາງວັນຍ້ອນວ່າຄວາມເສັຽອົງຄະເອງ. ບຸກຄົນຜູ້ທີ່ໃຊ້ຕັ່ງນັ່ງລໍ€ເຂັນ, ຕົວຢ່າງ, ອາດຈະໄດ້ຮັບ ຫລື ອາດຈະບໍ່ໄດ້ຮັບພາລະກິດເຊັ່ນວ່າ ຍົກເອົາ ແລະ ຫິ້ວເອົາຖົງເຄື່ອງກິນເຕັມ, ຂຶ້ນນຳວ່າເຂົາເຈົ້າສາມາດເຮັດໄດ້ໂດຍບໍ່ຕ້ອງຫັວງເພິ່ງໃຜ ຫລື ບໍ່.

### ການໃຊ້ອຸບປະກອນດັດແປງໃຫ້ເຂົ້າກັບສະພາບ

ຖ້າຫາກວ່າຜູ້ຮ້ອງຂໍສາມາດໃຊ້ໂດຍບໍ່ຕ້ອງຫວັງເພິ່ງໃຜໃນອຸບປະກອນດັດແປງໃຫ້ເຂົ້າກັບສະພາບຂອງເຂົາເຈົ້າ, ເຊັ່ນວ່າ, ລາວໃຊ້ເຄື່ອງດັດແປງໂດຍບໍ່ຕ້ອງການຄວາມຊ່ວຍເຫລືອ, ໃຫ້ຄະແນນພາລະກິດນັ້ນວ່າໄດ້ຖືກປະຕິບັດແທ້. ຖ້າຫາກວ່າລາວໃສ່ແວ່ນຕາ, ລາວເບິ່ງໄດ້ແຈ້ງດີປານໃດນຳແວ່ນຕາຂອງລາວ? ລາວຍ່າງໄດ້ດີປານໃດນຳໄມ້ຄ້ອນເທົ້າຂອງລາວ? ລາວກິນເຂົ້າໄດ້ດີປານໃດນຳບ່ວງຂອງລາວ, ເຖິງແມ່ນວ່າຈະເປັນບ່ວງໃຊ້ແທນ?

### ຢາປົວພະຍາດ

ໃຫ້ຖືວ່າຢາຄືກັນກັບອຸບປະກອນດັດແປງ, ເຊັ່ນວ່າ ແວ່ນຕາ ຫລື ເຄື່ອງຊ່ວຍຟັງສຽງ. ຜູ້ຮ້ອງຂໍປະຕິບັດງານໄດ້ດີປານໃດນຳຄວາມຊ່ວຍເຫລືອຂອງຢາຂອງລາວ?

### ວິທີການຕິດຕໍ່ສື່ສານທາງອື່ນ

ການໃຊ້ພາສາໃບ້ເປັນທາງການ (ບໍ່ແມ່ນການສະແດງທ່າທາງ) ຈະຖືກຖືວ່າເທົ່າທຽມກັບການປາກເວົ້າ. ປື້ມຕິດຕໍ່ສື່ສານ, ກະດານ, ແລະ ເຄື່ອງມືສາມາດຖືກຖືວ່າເທົ່າທຽມກັນກັບການປາກເວົ້າທີ່ຖືກເອົາໃຫ້ວ່າມັນມີຄຳເວົ້າຫລາຍໆຄຳເວົ້າທີ່ສາມາດຖືກລວມເຂົ້າໃສ່ກັນເພື່ອຈະເຮັດປະໂຍກຄຳເວົ້າແນວໃດແນວນຶ່ງ. ການຊີ້ໃສ່ຄຳເວົ້າ ຫລື ເຄື່ອງຫມາຍ "ຢູ່ໃສ" ແລະ ຄຳເວົ້າ ຫລື ເຄື່ອງຫມາຍຕ່າງຫາກ "ເສື້ອກັນຫນາວ", ຕົວຢ່າງວ່າ, ເຮັດໃຫ້ເປັນຄຳຖາມງ່າຍໆ. ພຽງແຕ່ຊີ້ບອກເຄື່ອງຫມາຍສຳລັບເສື້ອກັນຫນາວ ຫລື ໃສ່ຄຳຖາມຈະບໍ່ແມ່ນວ່າເຮັດໃຫ້ເປັນຄຳຖາມງ່າຍ.

### ຖືກຖາມ

ພາລະກິດ ICAP ບາງຢ່າງ, ໂດຍທົ່ວໄປແລ້ວພາລະກິດງ່າຍໆໄກ້ກັບລາຍການເລີ້ມຕົ້ນ, ແມ່ນໂດຍທົ່ວໄປແລ້ວຈະຖືກເຮັດໃສ່ການຕອບຕໍ່ຄຳຖາມເທົ່ານັ້ນ (ເຊັ່ນວ່າ *ບອກວັນເກີດ*) . ຢູ່ໃນກໍຣະນີນີ້ການປະພຶດອາດຈະຖືກໃຫ້ຄະແນນວ່າເຮັດໄດ້ດີຫລາຍເຖິງແມ່ນວ່າບຸກຄົນຈະຕອບຕໍ່ຄຳຖາມກໍຕາມ.

### ພາລະກິດແມ່ນງ່າຍເກີນໄປ

ບຸກຄົນອາດຈະບໍ່ປະຕິບັດພາລະກິດຕໍ່ໄປອີກແລ້ວຍ້ອນວ່າມັນງ່າຍເກີນໄປສຳລັບເຂົາເຈົ້າ. ພາລະກິດທີ່ງ່າຍເກີນໄປສຳລັບບຸກຄົນຄວນຈະຖືກໃຫ້ຄະແນນສະເມີວ່າເປັນ *ເຮັດໄດ້ດີຫລາຍ* **(3).** ຕົວຢ່າງວ່າ, ຖ້າຫາກວ່າບຸກຄົນເຮັດໄດ້ດີຫລາຍໃນພາລະກິດໃນການນຸ່ງເຄື່ອງໂດຍຕົນເອງທັງຫມົດ ແລະ ຮຽບຮ້ອຍ ແລະ ພາລະກິດ *ເດ່ແຂນ ແລະ ຂາອອກໄປໃນເວລານຸ່ງເຄື່ອງ* ຈະງ່າຍເກີນໄປສຳລັບບຸກຄົນ ແລະ ຄວນຈະໄດ້ຄະແນນ 3.

### ພາລະກິດທີ່ມີຫລາຍກວ່າພາກສ່ວນນຶ່ງ

ຖ້າຫາກວ່າພາກສ່ວນນຶ່ງຂອງພາລະກິດທີ່ມີຫລາຍພາກສ່ວນໄດ້ຖືກເຮັດສຳເຣັດດີ, ແຕ່ວ່າພາກສ່ວນອື່ນມີແຕ່ດີພໍປານກາງເທົ່ານັ້ນ, ພາລະກິດຕ້ອງຖືກໃຫ້ຄະແນນວ່າເປັນ *ດີພໍສົມຄວນ.* ຖ້າຫາກວ່າມັນມີພາກສ່ວນນຶ່ງຂອງພາລະກິດທີ່ບຸກຄົນບໍ່ສາມາດເຮັດໄດ້ເລີຍ, ພາລະກິດຕ້ອງຖືກໃຫ້ຄະແນນວ່າເປັນ *ບໍ່ເຄີຍຈັກເທື່ອ ຫລື ຫນ້ອຍທີ່ສຸດ.*

### ບໍ່ມີໂອກາດ

ຖ້າຫາກວ່າຜູ້ຮ້ອງຂໍບໍ່ມີໂອກາດທີ່ຈະປະຕິບັດພາລະກິດ ຫລື ບໍ່ຖືກອະນຸຍາດໃຫ້ທີ່ຈະທົດລອງເບິ່ງພາລະກິດຍ້ອນເຫດຜົນຢ່າງອື່ນນອກຈາກຣະດັບຂອງຄວາມຊຳນານຂອງເຂົາເຈົ້າ, ຕົວຢ່າງວ່າຖ້າຫາກວ່າກິຈກັມແມ່ນຂັດຕໍ່ກົດຣະບຽບຂອງເຮືອນ, ຫລື ກິຈກັມແມ່ນ "ວຽກຂອງຄົນອື່ນໆຄົນໃດຄົນນຶ່ງ," ໃຫ້ຄາດຕວງເບິ່ງວ່າບຸກຄົນຈະສຳເຣັດພາລະກິດໄດ້ ຫລື ບໍ່ ຫລື ເຮັດດີປານໃດ ໃນເວລານີ້ຖ້າຫາກວ່າມີໂອກາດໄດ້ເຮັດ.

### ການບອກໃຫ້ເຮັດ ຫລື ການສະແດງໃຫ້ເບິ່ງ

ມັນອາດຈະມີພາລະກິດ ICAP ທີ່ຜູ້ຮ້ອງຂໍບໍ່ເຄີຍຖືກຖາມໃຫ້ເຮັດຈັກເທື່ອ. ການສະແດງພາລະກິດໃຫ້ບຸກຄົນເບິ່ງເທື່ອນຶ່ງສຳລັບຈຸດປະສົງຂອງການອະທິບາຍໃຫ້ຟັງວ່າມັນແມ່ນຫຍັງທີ່ທ່ານຢາກໃຫ້ເຂົາເຈົ້າເຮັດຈະບໍ່ຖືກຖືວ່າເປັນການຝຶກແອບ ຫລື ການຄວບຄຸມເບິ່ງນຳ.

### ຄວາມປອດພັຍ

ຖ້າຫາກວ່າຜູ້ຮ້ອງຂໍບໍ່ຖືກອະນຸຍາດໃຫ້ປະຕິບັດພາລະກິດຍ້ອນວ່າຣະດັບຂອງຄວາມສາມາດຂອງເຂົາເຈົ້າ ແລະ/ຫລື ການຕັດສິນໃຈຂອງເຂົາເຈົ້າ ຈະກໍ່ໃຫ້ເກີດມີການຂົ່ມຂູ່ຕໍ່ຄວາມປອດພັຍຂອງເຂົາເຈົ້າ, ພາລະກິດຄວນຈະຖືກໃຫ້ຄະແນນວ່າເປັນ *ບໍ່ເຄີຍຈັກເທື່ອ ຫລື ຫນ້ອຍທີ່ສຸດ.* (ຫລື ອາດຈະເປັນໄປໄດ້ຣະດັບປານກາງ). ຍ້ອນວ່າເດັກນ້ອຍສາມາດປີ້ເຖິງ ແລະ ບິດປຸ່ມຂອງເຕົາອົບ, ເຊັ່ນຕົວຢ່າງ, ບໍ່ໄດ້ຫມາຍຄວາມວ່າເຂົາເຈົ້າສາມາດໃຊ້ເຕົາອົບໄດ້ໂດຍບໍ່ຕ້ອງຫວັງເພິ່ງໃຜ.

### ການຄວບຄຸມເບິ່ງນຳ

ການຄວບຄຸມເບິ່ງນຳວ່າຜູ້ຮ້ອງຂໍໄດ້ຮັບຈະຫລາຍເກີນກວ່າ ຫລື ຫນ້ອຍເກີນກວ່າທີ່ເຂົາເຈົ້າຕ້ອງການ, ຂື້ນນຳຈຳນວນທົ່ວໄປຂອງການຄວບຄຸມເບິ່ງນຳທີ່ມີຢູ່ໃນປັດຈຸບັນຢູ່ໃນເຮືອນ ຫລື ສະຖານທີ່. ບໍ່ມີຈັກເທື່ອທີ່, ການປະພຶດຂອງຜູ້ຮ້ອງຂໍຈະຖືກໃຫ້ຄະແນນອີງຕາມຄວາມສາມາດຂອງເຂົາເຈົ້າເອງທີ່ຈະປະຕິບັດພາລະກິດໂດຍບໍ່ຕ້ອງຫວັງເພິ່ງໃຜ, ບໍ່ແມ່ນອີງຕາມຣະດັບຂອງການຄວບຄຸມເບິ່ງນຳທົ່ວໄປ ຫລື ກົດຣະບຽບທົ່ວໄປຂອງສະຖານທີ່ບ່ອນໃດບ່ອນນຶ່ງ.

### ການຂໍເອົາຄຳອະນຸຍາດ

ຜູ້ຮ້ອງຂໍຈະບໍ່ຖືກປັບໄຫມສຳລັບການຮ້ອງຂໍເອົາຄຳອະນຸຍາດທີ່ເຫມາະສົມກ່ອນຈະເລີ້ມຕົ້ນເຮັດພາລະກິດ. ເຖິງແມ່ນວ່າບຸກຄົນບໍ່ໄດ້ເລີ້ມຕົ້ນພາລະກິດທັງຫມົດໂດຍຕົນເອງແລ້ວກໍຕາມ, ເຂົາເຈົ້າເລີ້ມຕົ້ນພາລະກິດໂດຍການຂອກເອົາຄຳອະນຸຍາດທີ່ເຫມາະສົມ.

### ຄວາມຮັບຮູ້, ແຮງບັນດານໃຈ, ແລະ ຄວາມຄາດຫມາຍໃນສັງຄົມ

ເພື່ອຈະໄດ້ຄະແນນ *ເຮັດໄດ້ດີຫລາຍ,* ຜູ້ຮ້ອງຂໍຕ້ອງການຄວາມສາມາດທີ່ຈະປະຕິບັດພາລະກິດ, ຄວາມຮັບຮູ້ເມື່ອຕ້ອງການພາລະກິດ, ແລະ ແຮງບັນດານໃຈເພື່ອຈະເຮັດມັນ, ອີງໃສ່ຄວາມຄາດຫມາຍໃນສັງຄົມສຳລັບສະພາບແວດລ້ອມຂອງເຂົາເຈົ້າ. ພາລະກິດເຊັ່ນວ່າ *ປູຣຽມຫ້ອງນອນ* ຈະເປັນຕົວຢ່າງທີ່ດີຢູ່ນີ້.

> ເດັກນ້ອຍ ຫລື ຜູ້ໃຫຍ່ເສັຽອົງຄະຮ້າຍແຮງຜູ້ທີ່ຂາດ **ຄວາມສາມາດ** ທີ່ຈະປູຕຽງນອນຈະຖືກໃຫ້ຄະແນນ *ບໍ່ເຄີຍຈັກເທື່ອ ຫລື ຫນ້ອຍທີ່ສຸດ,* ບໍ່ກ່ຽວກັບຄວາມຮັບຮູ້ ຫລື ແຮງບັນດານໃຈ.
>
> ຄົນໃດຄົນນຶ່ງຜູ້ທີ່ມີຄວາມສາມາດທີ່ຈະທຳຄວາມສະອາດໄດ້ດີ, ບາງທີຫລັງຈາກການຝຶກຝົນເປັນຂັ້ນຕອນທີ່ເຂັ້ມງວດແລ້ວ, ແຕ່ວ່າຜູ້ທີ່ບໍ່ສາມາດປະຕິບັດຕາມຕາຕະລາງໂດຍບໍ່ຫວັງເພິ່ງໃຜ ແລະ ຜູ້ທີ່ບໍ່ມີ **ຄວາມຮັບຮູ້** ວ່າເມື່ອໃດ ຫລື ຖ້າຫາກວ່າຄວາມຊຳນານແມ່ນຈຳເປັນ ຫລື ບໍ່ (ມັນຕ້ອງຖືກຖາມຢູ່ເລື້ອຍໆ), ມັນຕ້ອງຖືກໃຫ້ຄະແນນຕ່ຳກວ່າ *ເຮັດໄດ້ດີໂດຍບໍ່ຕ້ອງຖືກຖາມ.*
>
> ຜູ້ໃຫຍ່ບໍ່ຫວັງເພິ່ງໃຜຜູ້ທີ່ຮັກສາເຮືອນບໍ່ໃຫ້ເປື້ອນຈັກຫນ້ອຍເລີຍຈະຖືກໃຫ້ຄະແນນວ່າເປັນ *ເຮັດໄດ້ດີໂດຍບໍ່ຕ້ອງຖືກຖາມ.*
>
> ຜູ້ໃຫຍ່ບໍ່ຫວັງເພິ່ງໃຜຜູ້ທີ່ມີຫ້ອງນອນຮົກເຮື້ອຢູ່ສະເມີ, ແມ້ແຕ່ເມື່ອເວລາຫມູ່ຄູ່ໄກ້ສິດມາຢ້ຽມຢາມ, ແຕ່ວ່າໄດ້ຖືກທຳຄວາມສະອາດດີກ່ອນທີ່ມັນຈະກາຍເປັນບໍ່ມີອະນາມັຍ ແລະ ກ່ອນຕ້ອນຮັບຫມູ່ຄູ່ພິເສດ, ອາດຈະຍັງຖືກໃຫ້ຄະແນນວ່າ *ເຮັດໄດ້ດີ* ຖ້າຫາກວ່າຣະຍະເວລາຫ່າງກັນຂອງການທຳຄວາມສະອາດແມ່ນຢູ່ພາຍໃນຊ່ວງເວລາ **ຄວາມຄາດຫມາຍໃນສັງຄົມ** ຕາມທັມມະດາສຳລັບຜູ້ໃຫຍ່ບໍ່ເສັຽອົງຄະຢູ່ໃນສະພາບການດຳຣົງຊີວິດທີ່ຄ້າຍຄຽງກັນ.
>
> ສະມາຊິກຄອບຄົວຜູ້ທີ່ມີຄວາມສາມາດທີ່ຈະທຳຄວາມສະອາດຫ້ອງໄດ້ດີ, ຜູ້ທີ່ຮັກສາຫ້ອງໃຫ້ຢ່າງຫນ້ອຍມີອະນາມັຍດີຢູ່ເລື້ອຍໆ, ແຕ່ວ່າຜູ້ທີ່ທຳຄວາມສະອາດກໍຽງຫມົດເທົ່ານັ້ນຕາມທີ່ກົດຣະບຽບຂອງເຮືອນໄດ້ບົ່ງບອກ, ອີງຕາມຕາຕະລາງເວລາ, ຫລື "ເມື່ອເວລາມີຫມູ່ຄູ່ມາຢາມ" ອາດຈະຖືກໃຫ້ຄະແນນວ່າເປັນ *ເຮັດໄດ້ດີ* ຖ້າຫາກວ່າລາວປະຕິບັດຕາມຢູ່ເລື້ອຍໆຫລືເກືອບເລື້ອຍໆນຳ **ຄວາມຄາດຫມາຍໃນສັງຄົມ** ໂດຍບໍ່ມີການອອກຄວາມເຫັນ ຫລື ການຕັກເຕືອນບາງຄັ້ງບາງຄາວຫລາຍເກີນກວ່າເທື່ອນຶ່ງ.
>
> ຄົນໃດຄົນນຶ່ງຜູ້ທີ່ມີຄວາມສາມາດທີ່ຈະທຳຄວາມສະອາດໄດ້ດີ, ແຕ່ວ່າບໍ່ປະຕິບັດຕາມຕາຕະລາງເວລາໂດຍບໍ່ຕ້ອງຫວັງເພິ່ງໃຜ ແລະ ໂດຍທົ່ວໄປແລ້ວບໍ່ປະຕິບັດຄວາມຊຳນານເຖິງແມ່ນວ່າໃນເວລາທີ່ຄວາມຄາດຫມາຍໃນສັງຄົມໄດ້ຮຽກຮ້ອງຢ່າງແຈ່ມແຈ້ງ, ບໍ່ວ່າຈະເປັນຄວາມຂາດເຂີນໃນການຮັບຮູ້ ຫລື ການຂາດ **ແຮງບັນດານໃຈ,** ອາດຈະແມ່ນກ່ຽວພັນນຳບັນຫາສຸຂະພາບໂຣກຈິດ, ຕ້ອງຖືກໃຫ້ຄະແນນວ່າເປັນ *ເຮັດໄດ້ດີໂດຍ ບໍ່ຕ້ອງຖືກຖາມ.*

## ແມ່ນໃຜສາມາດຂຽນປະກອບ ICAP?

ພໍ່ແມ່ຄົນໃດກໍໄດ້, ນາຍຄູ, ຫລື ຄົນເບິ່ງແຍງດູແລຜູ້ທີ່ລ້ຽງເຄີຍດີນຳບຸກຄົນຜູ້ທີ່ຈະຖືກປະເມີນຜົນເບິ່ງສາມາດເອົາລາຍລະອຽດທີ່ຕ້ອງການໃຫ້ເພື່ອຈະຂຽນປະກອບ ICAP. ໃຫ້ໃຊ້ເປັນຄຳຊີ້ນຳຜູ້ຂຽນຂໍແນະນຳວ່າຖ້າຫາກວ່າຜູ້ຕອບຄຳຖາມມີການຕິດຕໍ່ພົວພັນນຳບຸກຄົນໃນແບບທຸກໆວັນໃນຢ່າງໜ້ອຍສາມເດືອນ, ເຂົາເຈົ້າຄວນຈະຮູ້ຈັກຜູ້ຮ້ອງຂໍໄດ້ດີພຽງພໍທີ່ຈະຂຽນປະກອບພາລະກິດການປະພຶດປັບຕົວ ICAP ໂດຍອີງຕາມຄວາມຮັບຮູ້ສ່ວນຕົວໃນບຸກຄົນຂອງເຂົາເຈົ້າ.ຜູ້ຕອບຄຳຖາມສາມາດຂຽນປະກອບປຶ້ມນ້ອຍ ICAP ໂດຍກົງໂລດ (ຖ້າຫາກວ່າຄຸ້ນເຄີຍນຳຄຳແນະນຳເຫລົ່ານີ້ແລະ ຄຳຊີ້ນຳທົ່ວໄປສຳລັບການຂຽນປະກອບ ICAP ຕາມທີ່ຖືກພິມເຫັນຢູ່ໃນ Appendix D ຂອງປຶ້ມຄູ່ມື ICAP Manual), ຫລື ສາມາດເອົາລາຍລະອຽດໃຫ້ຜູ້ສຳພາດເຊັ່ນວ່າພະນັກງານສັງຄົມ. ມັນບໍ່ສຳຄັນໂດຍກົງໂລດວ່າລາຍລະອຽດຈະໄດ້ມາແນວໃດ ຫລື ຈາກໃຜນານເທົ່ານານທີ່ລາຍລະອຽດກ່ຽວກັບບຸກຄົນ ແລະ ການປະພຶດຂອງລາວແມ່ນປັດຈຸບັນ ແລະ ຖືກຕ້ອງ. ຜູ້ຕອບຄຳຖາມຫລາຍໆຄົນອາດຈະຖືກປຶກສາໄດ້.

## ຖ້າຫາກວ່າຂ້ອຍຮູ້ວ່າຜູ້ຕອບຄຳຖາມ ຫລື ເວົ້າບໍ່ຈິງ ຫລື ຖ້າຫາກວ່າຜູ້ຕອບຄຳຖາມສອງຄົນບໍ່ເຫັນພ້ອມນຳກັນເດ?

ພໍ່ແມ່ທີ່ປົກປ້ອງລູກເກີນໄປອາດຈະເວົ້າວ່າ “ລາວສາມາດເຮັດໄດ້, ແຕ່ວ່າຂ້ອຍບໍ່ໃຫ້ລາວເຮັດ.” ຜູ້ຕອບຄຳຖາມທີ່ເວົ້າບໍ່ຈິງອາດຈະເວົ້າວ່າ “ລາວສາມາດເຮັດໄດ້ແຕ່ວ່າລາວບໍ່ເຮັດ....” ບໍ່ວ່າຢູ່ໃນກໍລະນີໃດ, ຈຸດມຸ່ງໝາຍແມ່ນເພື່ອຈະເກັບກຳເອົາ ແລະ ບັນທຶກລາຍລະອຽດທີ່ເປັນປັດຈຸບັນ ແລະ ຖືກຕ້ອງ. ຖາມຄຳຖາມເພີ້ມເຕີມບາງຄຳຖາມເພື່ອຈະພິຈາລະນາເບິ່ງວ່າຜູ້ຮ້ອງຂໍໄດ້ເກັ່ງໃນຄວາມຊຳນານ ຫລື ບໍ່ ແລະ ລາວໄດ້ປະຕິບັດພາລະກິດແທ້ຈິງຢ່າງປອດພັຍໄດ້ດີເທົ່າໃດຖ້າຫາກວ່າໄດ້ມີໂອກາດ. ຖ້າຫາກວ່າຈຳເປັນ, ປຶກສານຳຜູ້ຕອບຄຳຖາມເພີ້ມເຕີມອີກ (ພໍ່ແມ່, ນາຍຄູ, ພະນັກງານ, ຫລື ບາງທີຜູ້ຮ້ອງຂໍເອງ) ຈົນກວ່າທ່ານຈະເພິ່ງພໍໃຈວ່າລາຍລະອຽດທີ່ທ່ານບັນທຶກສະທ້ອນເຖິງການປະພຶດອັນແທ້ຈິງຂອງຜູ້ຮ້ອງຂໍຢູ່ໃນສະພາບການທັມມະດາ.

## ຖ້າຫາກວ່າພາລະກິດໄດ້ຖືກປະເປົ່າວ່າງໄວ້ເດ?

ການທົດສອບບໍ່ສາມາດຖືກໃຫ້ຄະແນນໄດ້ຖ້າຫາກວ່າພາລະກິດໄດ້ຖືກປະເປົ່າວ່າງໄວ້. ໝາຍໃສ່ຄຳຕອບອັນນຶ່ງສຳລັບພາລະກິດການປະພຶດປັບຕົວທຸກໆອັນຢູ່ໃນແຕ່ລະຈຳພວກຂອງສີ່ຈຳພວກ (77 ພາລະກິດ).

## ຖ້າຫາກວ່າຂ້ອຍບໍ່ຮູ້ຈັກການປະຕິບັດງານຂອງບຸກຄົນໃນພາລະກິດບາງຢ່າງເດ?

ຖ້າຫາກວ່າທ່ານບໍ່ມີໂອກາດທີ່ຈະສັງເກດເບິ່ງຜູ້ຮ້ອງຂໍປະຕິບັດພາລະກິດ, ຫລື ຖ້າຫາກວ່າຜູ້ຮ້ອງຂໍບໍ່ມີໂອກາດ ຫລື ຄວາມຮັບຜິດຊອບທີ່ຈະເຮັດພາລະກິດ, ຖາມຄົນໃດຄົນນຶ່ງອີກຜູ້ທີ່ໄດ້ສັງເກດເຫັນ, ຫລື ກະຕວງເອົາວ່າຜູ້ຮ້ອງຂໍສາມາດປະຕິບັດພາລະກິດໄດ້ ຫລື ບໍ່ ແລະ ໄດ້ດີປານໃດໃນເວລາດຽວນີ້ໂດຍປາສຈາກຄວາມຊ່ວຍເຫລືອ ຫລື ການຝຶກພົນເພີ້ມເຕີມ. ໂດຍອີງຕາມຄວາມຄາດໝາຍຂອງທ່ານໃນລາຍລະອຽດ ຫລື ການສັງເກດເບິ່ງໃນການປະຕິບັດພາລະກິດຂອງບຸກຄົນໃນພາລະກິດທີ່ກ່ຽວຂ້ອງ ຫລື ຄ້າຍຄືກັນ.

## ການເຈັບປ່ວຍ ຫລື ການຂາດເຈັບຊົ່ວຄາວທີ່ໄດ້ສະທ້ອນເຖິງການປະພຶດເດ?

ໂດຍທົ່ວໄປແລ້ວ, ໃຫ້ຄະແນນການປະຕິບັດງານທົ່ວໄປຂອງຜູ້ຮ້ອງຂໍໃນລະຫວ່າງເດືອນລ່າສຸດໝູ່ທີ່ສຸດ. ເພື່ອຈະໃຫ້ເປັນການເຊື່ອຖືໄດ້, ການທົດສອບຕ້ອງໄດ້ວັດແທກການປະພຶດຂື້ນລົງໃນຈຸດເວລາອັນເຈາະຈົງ. ຖ້າຫາກວ່າເປັນໄປໄດ້, ຖ່ວງເວລາການປະເມີນຜົນໄປຈົນກວ່າຄົນເຈັບປ່ວຍຮ້າຍແຮງຈະໄດ້ເຊົາປ່ວຍເຖິງສະພາບທຸ່ນທ່ຽງແລ້ວ.

## ບຸກຄົນຜູ້ທີ່ມີການເຈັບປ່ວຍໂຣກຈິດເດ, ຜູ້ທີ່ການປະຕິບັດຂອງເຂົາເຈົ້າອາດຈະປ່ຽນແປງຢູ່ໃນວົງຈອນ ຫລື ຈາກເວລານຶ່ງໄປຫາເວລານຶ່ງ?

ໂດຍທົ່ວໄປແລ້ວ, ໃຫ້ຄະແນນການປະຕິບັດງານທົ່ວໄປຂອງຜູ້ຮ້ອງຂໍໃນລະຫວ່າງເດືອນລ່າສຸດໝູ່ທີ່ສຸດ. ເພື່ອຈະໃຫ້ເປັນການເຊື່ອຖືໄດ້, ການທົດສອບຕ້ອງໄດ້ວັດແທກການປະພຶດຂື້ນລົງໃນຈຸດເວລາອັນເຈາະຈົງ. ຖ້າຫາກວ່າເປັນໄປໄດ້, ຖ່ວງເວລາການປະເມີນຜົນໄປຈົນກວ່າຄົນເຈັບປ່ວຍຮ້າຍແຮງຈະໄດ້ເຊົາປ່ວຍເຖິງສະພາບທຸ່ນທ່ຽງແລ້ວ.

ຖ້າຫາກວ່າເຄືອນແລ້ວນີ້ເປັນການປະພຶດຕະລອດປີທັມມະດາ, ຊຶ່ງມັນອາດຈະເປັນກໍຣະນີສໍາລັບບັນຫາສຸຂະພາບໂຣກຈິດບາງຢ່າງຊຶ່ງອາດຈະເປັນ (ຫລື ບໍ່ເປັນ) ໃນປັດຈຸບັນນີ້ໃນການບັນທຶກ, ຫລື ການເຂັ້ມງວດຂອງຜູ້ຄວບຄຸມງານອາດຈະຕ້ອງໄດ້ປ່ຽນແປງຕະລອດປີເພື່ອຈະໃຫ້ສອດຄ່ອງນໍາການປະພຶດ. *ອັນນີ້ເປັນຄໍາຖາມກ່ຽວກັບນະໂຍບາຍ, ບໍ່ແມ່ນຄໍາຖາມກ່ຽວກັບການປະເມີນຜົນ.* ນະໂຍບາຍ, ເຈາະຈົງໃນແຕ່ລະຣັດ ຫລື ແຕ່ລະຫ້ອງການ, ສາມາດລວມເອົາທີ່ອາດຈະເປັນໄປໄດ້ທັງ "ກໍຣະນີຮ້າຍແຮງ " ແລະ "ກໍຣະນີດີທີ່ສຸດ " ICAP, ພ້ອມທັງວິທີການດໍາເນີນສໍາລັບການປະຕິບັດນໍາການຄວບຄຸມເອກສານຕະລອດປີ.

**ຄົນມັກຮ່ວມເພດນໍາເດັກນ້ອຍ ຫລື ຄົນວາງເພີງ ຫລື ຄົນໃດຄົນນຶ່ງອີກຜູ້ທີ່ມີການປະພຶດດັດແປງສູງແຕ່ວ່າເປັນຜູ້ທີ່ມີເອກຣາດຈໍາກັດໂດຍຄວາມຕ້ອງການສໍາລັບການຄວບຄຸມເບິ່ງນໍາໂດຍຕະລອດເດ?**

ການປະພຶດດັດແປງຂອງຜູ້ຮ້ອງຂໍຄວນຈະຖືກໃຫ້ຄະແນນໂດຍອີງຕາມຄວາມສາມາດຂອງເຂົາເຈົ້າທີ່ຈະປະຕິບັດພາລະກິດໂດຍບໍ່ຫວັງເພິ່ງໃຜ, ບໍ່ກ່ຽວກັບຣະດັບຂອງການຄວບຄຸມເບິ່ງນໍາທີ່ຈໍາເປັນຕ້ອງມີຍ້ອນບັນຫາການປະພຶດຂອງລາວ. ຖ້າຫາກວ່າຜູ້ຮ້ອງຂໍເຮັດ (ຫລື ສາມາດເຮັດໄດ້) ພາລະກິດຊັ່ນວ່າ *ປະຕິບັດຕົວຢ່າງເຫມາະສົມຢູ່ຕາມສາທາຣະນະຢູ່ນໍາຫມູ່ເພື່ອນ,* ລາວຄວນຈະໄດ້ຮັບເຄຣດິດສໍາລັບພາລະກິດອັນນີ້ເຖິງແມ່ນວ່າມັນຈະຕ້ານຕໍ່ກົດຣະບຽບສໍາລັບລາວທີ່ຈະອອກໄປນອກເຮືອນຄົນດຽວນໍາຫມູ່ເພື່ອນ. ຜູ້ຮ້ອງຂໍເຫລົ່ານັ້ນຕ້ອງການການຄວບຄຸມເບິ່ງນໍາຫລາຍກວ່າທີ່ການປະພຶດດັດແປງຂອງເຂົາເຈົ້າເອງຊີ້ບອກ, ຍ້ອນການປະພຶດທີ່ບໍ່ດັດແປງຂອງເຂົາເຈົ້າ. ບາງຣັດຈະໃຊ້ຄໍາຖາມເພີ້ມເຕີມນອກຈາກຄະແນນ ICAP ເພື່ອຈະສັ່ງເອົາຣະດັບຂອງການຄວບຄຸມເບິ່ງນໍາສໍາລັບສະພາບການພິເສດເຫລົ່ານີ້.ອີກເທື່ອນຶ່ງ, *ອັນນີ້ເປັນຄໍາຖາມກ່ຽວກັບນະໂຍບາຍ, ບໍ່ແມ່ນຄໍາຖາມກ່ຽວກັບການປະເມີນຜົນ.*